# ບົດບັນທຶກການຮ່ວມມື
# ລະຫວ່າງ ນະຄອນຫຼວງວຽງຈັນ ແລະ ກຸງເທບມະຫານະຄອນ

ໂດຍຕອບສະໜອງຕາມຄຳເຊື້ອເຊີນ ຂອງ ທ່ານ ດຣ. ສິນລະວົງ ຄຸດໄພທູນ, ເຈົ້າຄອງນະຄອນຫຼວງວຽງຈັນ, ທ່ານ ອະພິລັກ ໂກສະໂຍທິນ, ຜູ້ວ່າຣາຊະການກຸງເທບມະຫານະຄອນ ແຫ່ງ ຣາຊະອານາຈັກໄທ ພ້ອມດ້ວຍ ພັນລະຍາ ແລະ ຄະນະ ໄດ້ເດີນທາງມາຢ້ຽມຢາມນະຄອນຫຼວງວຽງຈັນ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນໄລຍະວັນທີ 10 - 12/06/2008.

ໃນໄລຍະເຄື່ອນໄຫວຢ້ຽມຢາມ ຢູ່ ນະຄອນຫຼວງວຽງຈັນ, ຄະນະຜູ້ແທນຂັ້ນສູງ ຂອງ ກຸງເທບມະຫານະຄອນ ໄດ້ພົບປະກັບຄະນະຜູ້ແທນຂັ້ນສູງນະຄອນຫລວງວຽງຈັນ, ໄດ້ເຄື່ອນໄຫວຢ້ຽມຢາມພື້ນຖານການຜະລິດ, ລັດວິສາຫະກິດຈຳນວນໜຶ່ງ ແລະ ພິເສດໄດ້ເຂົ້າຢ້ຽມຂຳນັບ ພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ, ຊຶ່ງໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ສະໜິດສະໜົມຖານບ້ານພີ່ເມືອງນ້ອງ ບ້ານໃກ້ເຮືອນຄຽງ.

ບົນພື້ນຖານສາຍພົວພັນຮ່ວມມືທີ່ດີ ຖານບ້ານພີ່ເມືອງນ້ອງບ້ານໃກ້ເຮືອນຄຽງ ແລະ ໂດຍສະເພາະ ລະຫວ່າງ 2 ນະຄອນຫລວງ ແລະ ເປັນການພັນຂະຫຍາຍບົດບັນທຶກ ຮ່ວມມື 2 ຝ່າຍ ລົງວັນທີ 24 ພຶດສະພາ 2004 ໃຫ້ເປັນຈິງ, ເຈົ້າຄອງນະຄອນຫລວງວຽງຈັນ ແລະ ຜູ້ວ່າຣາຊະການກຸງເທບມະຫານະຄອນ ໄດ້ເຫັນພ້ອມນຳກັນ ດັ່ງນີ້:

1. ທັງສອງຝ່າຍ ຕີລາຄາສູງຕໍ່ຜົນການປະຕິບັດບົດບັນທຶກ ລະຫວ່າງ 2 ນະຄອນຫຼວງ ສະບັບລົງວັນທີ 24 ພຶດສະພາ 2004 ລະຫວ່າງ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ຜູ້ວ່າຣາຊະການກຸງເທບມະຫານະຄອນ ຊຸດກ່ອນ, ຊຶ່ງຈະມີການໃຫ້ທຶນຝຶກອົບຮົມ ຢູ່ ກຸງເທບມະຫານະຄອນ ໃຫ້ແກ່ພະນັກງານນະຄອນຫລວງວຽງຈັນ ຈຳນວນໜຶ່ງ.
2. ທັງສອງຝ່າຍ ຈະສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຄະນະວິຊາການໃນຂະແໜງການທີ່ 2 ນະຄອນຫລວງ ມີຄວາມສົນໃຈ ແລະ ເປັນໄປຕາມກົນໄກວຽກງານການຕ່າງປະເທດ ຂອງ 2 ປະເທດ. ທັງສອງຝ່າຍ ເຫັນດີໃນການສົ່ງເສີມການທ່ອງທ່ຽວ, ສຶກສາ, ສາທາລະນະສຸກ, ແຮງງານ, ການພັດທະນາ ແລະ ຄຸ້ມຄອງຕົວເມືອງ.
3. ທັງສອງຝ່າຍ ເຫັນດີສົ່ງເສີມການທ່ອງທ່ຽວ ລະຫວ່າງ 2 ນະຄອນຫລວງ ແລະ ສະເຫຼີມສະຫລອງວັນນະຄອນວຽງຈັນ 450 ປີ ໃນປີ 2010 ໂດຍຈະມີແລກປ່ຽນການສະແດງຄອນເສີດ ຢູ່ ນະຄອນຫຼວງວຽງຈັນ ແລະ ກຸງເທບມະຫານະຄອນ ໂດຍມອບໃຫ້ເຈົ້າໜ້າທີ່ທ່ອງທ່ຽວ ແລະ ວັດທະນະທຳ ເປັນຜູ້ປະສານງານນຳກັນ.

   **3.1** ກຸງເທບມະຫານະຄອນ ເຫັນດີຈະພິຈາລະນາ ກ່ຽວກັບຄຳສະເໜີ ຂອງ ເຈົ້າຄອງນະຄອນຫຼວງວຽງຈັນ ໃນການສະໜັບສະໜູນການສ້າງສວນສາທາລະນະມິດຕະພາບ ວຽງຈັນ - ກຸງເທບມະຫານະຄອນ ເພື່ອເປັນຂອງຂັວນໃນໂອກາດ ນະຄອນຫຼວງວຽງຈັນ ຄົບຮອບ 450 ປີ ( ໃນປີ 2010 ) ຢູ່ ບ້ານໜອງດ້ວງ ເມືອງສີໂຄດຕະບອງ ນະຄອນຫລວງວຽງຈັນ ຕາມລະບຽບກົດໝາຍຂອງ ສ.ປ.ປ.ລາວ ແລະ ລະບຽບກົດໝາຍ ຂອງ ຣາຊະອານາຈັກໄທ.

3.2 ກຸງເທບມະຫານະຄອນ ເຫັນດີສະໜັບສະໜູນໃນການສະເຫຼີມສະຫຼອງ ວັນສ້າງຕັ້ງ ວຽງຈັນ ເປັນ ນະຄອນຫລວງ ຄົບຮອບ **450** ປີ ( ໃນປີ **2010** ) ໂດຍຈະສົ່ງຜູ້ແທນ ແລະ ກິດຈະກຳ ຂອງຕົນ ເຂົ້າຮ່ວມງານຕາມການເຊື້ອເຊີນ ຂອງ ຝ່າຍນະຄອນຫລວງວຽງຈັນ.

4. ຝ່າຍກຸງເທບມະຫານະຄອນ ຍິນດີສະໜັບສະໜູນການຈັດງານມະຫາກຳກິລາຊີເກມ ຄັ້ງທີ **25** ທີ່ ນະຄອນຫລວງວຽງຈັນ ປີ **2009** ຕາມແຜນ ຂອງ ລັດຖະບານ ແລະ ເຫັນດີ ໃຫ້ທີມນັກຮຽນພອນສະຫວັນກິລາ ຢູ່ ບ້ານຮ່ອງຄ້າ, ເມືອງຈັນທະບູລີ ໄປຝຶກຊ້ອມກິລາ ຢູ່ ກຸງເທບມະຫານະຄອນ.

5. ເພື່ອສືບຕໍ່ສາຍພົວພັນມິດຕະພາບອັນດີງາມ ແລະ ການຮ່ວມມື 2 ນະຄອນຫລວງ ໃຫ້ແໜ້ນແຟ້ນຂື້ນກວ່າເກົ່າ, ຝ່າຍກຸງເທບມະຫານະຄອນ ໄດ້ເຊື້ອເຊີນ ທ່ານເຈົ້າຄອງນະຄອນຫລວງວຽງຈັນ ພ້ອມດ້ວຍພັນລະຍາ ແລະ ຄະນະ ເດີນທາງໄປຢ້ຽມຢາມ ຢ່າງເປັນທາງການ ຢູ່ ກຸງເທບມະຫານະຄອນ, ຊຶ່ງຝ່າຍນະຄອນຫລວງວຽງຈັນ ໄດ້ຕອບຮັບການເຊື້ອເຊີນດ້ວຍຄວາມຍິນດີ. ສ່ວນວັນເວລາລະອຽດ, ທັງສອງຝ່າຍ ຈະໄດ້ແຈ້ງໃຫ້ກັນຊາບຕາມພາຍຫຼັງ ໂດຍຜ່ານ ສາຍການທູດ ຂອງ ສອງປະເທດ.

ບົດບັນທຶກການຮ່ວມມືສະບັບນີ້ ໄດ້ສ້າງຂຶ້ນ ທີ່ ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ **11 ມີຖຸນາ 2008** ເປັນ **2** ສະບັບ ແລະ ເປັນພາສາລາວ ແລະ ພາສາໄທ, ຊຶ່ງທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

**ຫົວໜ້າຄະນະຜູ້ແທນຂັ້ນສູງ**
**ຂອງ ນະຄອນຫຼວງວຽງຈັນ**

**ດຣ. ສິນລະວົງ ຄຸດໄພທູນ**
**ເຈົ້າຄອງນະຄອນຫຼວງວຽງຈັນ**

**ຫົວໜ້າຄະນະຜູ້ແທນຂັ້ນສູງ**
**ຂອງ ກຸງເທບມະຫານະຄອນ**

**ອະພິລັກ ໂກສະໂຍທິນ**
**ຜູ້ວ່າຣາຊະການກຸງເທບມະຫານະຄອນ**